**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 5 ມະກະຣາ(ມັງກອນ) 2025 (01-05-2025)

## ເບິ່ງໄປທາງໜ້າດ້ວຍຄວາມຄາດຫວັງ

**ຈຸດສຳຄັນໃນບົດຮຽນ:** ພຣະເຢຊູຈະຊົງກັບຄືນມາເພື່ອນຳພາພວກເຮົາໄປສູ່ພຣະຣາຊອານາຈັກຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ປາໂລມາ(dolphin), ໂຕຫ່ານ(geese), ແລະນົກເພນກວິນ(penguin) ມີຫຍັງທີ່ຄືກັນ? ມັນເປັນຄວາມຈິງທີ່ພວກມັນແຕກຕ່າງກັນຫຼາຍ. ຈຳພວກນຶ່ງບິນ, ຈຳພວກນຶ່ງອາສັຍຢູ່ໃນທະເລມະຫາສມຸດ, ແລະອີກຈຳພວກນຶ່ງອາສັຍຢູ່ເທິງນ້ຳແຂງ. ແຕ່ລະບັນດາສັດເຫຼົ່ານີ້ມີຂອງຂວັນທີ່ເປັນເອກກະລັກແລະບໍ່ໜ້າເຊື່ອ. ພວກມັນແຕ່ລະຕົວນອນຫຼັບຕານຶ່ງ, ເປີດຕານຶ່ງ. ພາກສ່ວນນຶ່ງຂອງສມອງຂອງພວກມັນຖືກປິດລົງ ໃນຂນະທີ່ອີກພາກສ່ວນນຶ່ງຍັງຕື່ນຢູ່. ແຕ່ລະພາກສ່ວນຈຳເປັນຕ້ອງ ຕື່ນຕົວຢູ່, ຢ່າງນ້ອຍພຽງຊົ່ວຄາວ. ປາໂລມາຈຳເປັນຕ້ອງຂຶ້ນມາຈາກທ້ອງນ້ຳເພື່ອເອົາອາກາດ. ໂຕຫ່ານຕ້ອງນອນໃນລະຍະເວລາຍົກຍ້າຍທ້ອງຖິ່ນ, ແລະນົກເພນກວິນຈຳເປັນຕ້ອງມີຄວາມລະມັດລະວັງເພື່ອຫຼີກເວັ້ນບັນດາສັດນັກລ່າ. ພວກເຮົາທັງໝົດເຄີຍໄດ້ຍິນປໂຍກທີ່ວ່າ: "**ຈົ່ງນອນດ້ວຍຫຼັບຕາດຽວ.**" <u>ບັນດາພວກສັດເຫຼົ່ານີ້ເຮັດແບບນັ້ນແທ້ໆ!</u> ໃນນາມເປັນພວກຕິດຕາມອົງພຣະຄຣິດ, ພວກເຮົາສາມາດຮຽນຮູ້ຫຼວງຫຼາຍຈາກບັນດາສັດເຫຼົ່ານີ້. ໂດຍທາງຈິດວິນຍານ, ພວກເຮົາຈຳເປັນຕ້ອງ <u>ສືບຕໍ່ດຳເນີນຊີວິດດ້ວຍຄວາມເຊື່ອຟັງໃນແຕ່ລະວັນ</u> ໃນຂນະທີ່ຍັງຄາດຫວັງການຊົງສະເດັດກັບມາຂອງອົງພຣະຄຣິດ.

*ເມື່ອໃດເປັນຄັ້ງສຸດທ້າຍທີ່ທ່ານຮູ້ສຶກເຖິງຄວາມຄາດຫວັງອັນໃຫຍ່ຫຼວງສຳລັບເຫດການທີ່ຈະມາເຖິງ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ມັດທາຍ 24:32-35</u>**

*32 "ຈົ່ງຮຽນຄຳອຸປະມາຈາກຕົ້ນເດື່ອເທດ ເມື່ອກິ່ງກ້ານມັນແຕກໃບອ່ອນອອກພວກທ່ານກໍຮູ້ວ່າລະດູຮ້ອນໃກ້ຈະມາເຖິງແລ້ວ. 33*
*ຢ່າງນີ້ແຫລະ, ພວກທ່ານກໍເໝືອນກັນ ເມື່ອເຫັນເຫດການເຫລົ່ານັ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ. 34 ເຮົາບອກ*
*ພວກທ່ານຕາມຄວາມຈິງວ່າ ຄົນໃນສມັຍນີ້ຈະບໍ່ລ່ວງລັບໄປກ່ອນເຫດການທັງປວງນີ້ບັງເກີດຂຶ້ນ. 35 ຟ້າແລະດິນກໍຈະລ່ວງພົ້ນໄປ*
*ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ."*

ພວກເຮົາບໍ່ຈື່ລາຍລະອຽດຂອງແຕ່ລະມື້ເມື່ອ 24 ປີກ່ອນ, ແຕ່ພວກເຮົາສ່ວນໃຫຍ່ຈື່ມື້ນັ້ນໄດ້.ມັນແມ່ນຕອນເຊົ້າຂອງວັນອັງຄານທີ່ສວຍງາມຂອງເມືອງ ແອບໂປໃຫຍ່ (Big Apple New York City). ທ້ອງຟ້າແຈ່ມໃສ, ສີຟ້າຜູ້ຄົນສ່ວນໃຫຍ່ບໍ່ຄາດຄິດມາກ່ອນວ່າພາຍໃນບໍ່ຫຼາຍນາທີໂລກຈະພົກຂວ້າມເມື່ອຕຶກແຝດສູນການຄ້າໂລກ (World Trade Center Twin Towers) ຖລົ່ມລົງມາ. ເມື່ອເກືອບ 90 ປີກ່ອນໜ້ານີ້, ກຳປັ່ນລຳໃຫຍ່ໄດ້ອອກເດີນທາງໄປຍັງເມືອງດຽວກັນ ຈົນກວ່າກຳປັ່ນ ໄທທານິກ (Titanic) ທີ່ເປັນກຳປັ່ນທີ່ບໍ່ອາດຈົມນ້ຳໄດ້, ເຂົ້າໄປກະທົບກັບພູນ້ຳກ້ອນ(iceberg) ແລະເບິ່ງຄືວ່າ <u>ສິ່ງທີ່ເປັນໄປບໍ່ໄດ້</u> ໄດ້ເກີດຂຶ້ນ. ພຣະວິຫານໃນກຸງເຢຣູຊາເລັມ ອາດເປັນສະຖານທີ່ທ່ອງທ່ຽວທີ່ໜ້າຢ້ານກົວທີ່ສຸດໃນໂລກໃນສມັຍນັ້ນ. ຫີນກ້ອນໃຫຍ່ປະດັບດ້ວຍທອງຄຳ. ຫີນເຫຼົ່ານັ້ນໄດ້ຖືກຂຸດຂຶ້ນມາດ້ວຍຄວາມແມ່ນຍຳ. ການກໍ່ສ້າງໄດ້ເລີ່ມຂຶ້ນປະມານ 20 ປີກ່ອນສມັຍພຣະເຢຊູ ແລະຍັງຄົງດຳເນີນຢູ່ຈົນກະທັ້ງອົງພຣະເຢຊູຊົງຢູ່ທີ່ນັ້ນກັບບັນດາພວກສາວົກຂອງພຣະອົງ. ພວກເຮົາພຽງແຕ່ນຶກພາບໄດ້ເຖິງຄວາມແປກໃຈຂອງບັນດາພວກລູກສິດເມື່ອພຣະເຢຊູຊົງເວົ້າ

ກັບພວກເຂົາເຈົ້າວ່າ: "**ພວກເຈົ້າເຫັນສິ່ງທັງໝົດເຫຼົ່ານີ້ບໍ່ແມ່ນບໍ່? ເຮົາບອກພວກເຈົ້າຕາມຄວາມຈິງວ່າ, ຫີນທຸກໆກ້ອນທີ່ຢອງທັບກັນຢູ່ນີ້ ຈະຖືກທຳລາຍລົງຈົນບໍ່ເຫຼືອຈັກກ້ອນ.**" (ມັດທາຍ 24:2). ມັນເບິ່ງຄືວ່າ, ເຊັ່ນດຽວກັນ, ເປັນເຣື່ອງທີ່ເປັນໄປບໍ່ໄດ້. ໃນປີ 70 ຫຼັງ ຄສ, ການທຳນວາຍຂອງພຣະເຢຊູໄດ້ການເປັນຄວາມຈິງຂອງໂລກ. ບັນດາພວກສາວົກຂອງພຣະອົງມີຄວາມປາຖນາຢາກຮູ້ວ່າເຫດການນີ້ຈະເກີດຂຶ້ນເມື່ອໃດແລະເມື່ອໃດພຣະອົງຈະຊົງກັບມາອີກ, ແຕ່ອົງພຣະເຢຊູໄດ້ຊົງຕອບດ້ວຍພຣະຄຳທີ່ນຳຄຳຖາມມາເພີ່ມຕື່ມອີກ. ພຣະເຢຊູໄດ້ຊົງກ່າວເຖິງຊ່ວງເວລາແຫ່ງຄວາມທຸກລຳບາກ, ປາກົດການຂອງຄວາມມືດ, ພະຄຣິດປອມ, ເທວະດາ, ແລະສຽງແກຟົດສນັ່ນ. ແລະຈາກນັ້ນ ໃນທີ່ສຸດ ພຣະເຢຊູໄດ້ຊົງມາເຖິງເວລາທີ່ຈະຕ້ອງຊົງກ່າວປາສັຍ. ແທນທີ່ຈະບອກເວລາທີ່ແນ່ນອນ, ພຣະອົງກັບໄດ້ຊົງສເນີການປຽບທຽບທີ່ພວກເຂົາເຈົ້າເຂົ້າໃຈດັ່ງນີ້: ຕົ້ນໝາກເດື່ອເທດມີລະດູການ, ອອກດອກໃນລະດູໃບໄມ້ປົ່ງເມື່ອມີນ້ຳລ້ຽງສູງອອກຈາກລຳຕົ້ນຂອງມັນ. ມັນທັງໝົດແມ່ນສັນຍາລັກວ່າລະດູຮ້ອນແມ່ນໃກ້ເຂົ້າມາແລ້ວ, ແລະໝາກເດື່ອກໍ່ຈະສຸກແລ້ວ. ໃນຂນະທີ່ພວກເຮົາສເລີມສລອງອີກປີນຶ່ງ, ພວກເຮົາໄດ້ຮັບການຕັກເຕືອນກ່ຽວກັບຍຸກໃໝ່ໃນເວລາທີ່ອົງພຣະເຢຊູຈະຊົງແກ້ໄຂຄວາມຜິດບາບທັງໝົດໃນເວລາອັນສັ້ນ. ພຣະອົງຈະຊົງສະເດັດກັບມາອີກຄັ້ງທີ່ສອງ, ບໍ່ແມ່ນໃນນາມຜູ້ຮັບໃຊ້ທີ່ທົນທຸກທໍຣະມານ, ແຕ່ຊົງມາໃນນາມພຣະມະຫາກະສັດຜູ້ຊົງປົກຄອງ. ພວກເຮົາທຸກຄົນສແວງຫາມື້ນັ້ນ, ແລະໃນມື້ນີ້ພວກເຮົາເຫັນວິສັຍທັສ (vision) ໃນສມັຍໂບຮານກາຍເປັນຄວາມຈິງ. **ພຣະເຢຊູໄດ້ຊົງປະພຣະສັນຍາແລະໝາຍສຳຄັນຕ່າງໆໄວ້ໃຫ້ແກ່ພວກເຮົາ.** ພຣະອົງຊົງເຊື້ອເຊີນພວກເຮົາໃຫ້ປະຕິບັດ, ເບິ່ງ(ສັງເກດ), ແລະລໍຖ້າວັນນັ້ນ. ພວກເຮົາອາສັຍຢູ່ໃນຄວາມເປັນຈິງຂອງເຣື່ອງການຊົງໄຖ່ໃນເວລາທີ່ຄຳພະຍາກອນຂອງພຣະເຢຊູຈະຈະເຣີນຮຸ່ງເຮືອງຄືກັນກັບການເປີດບານຂອງດອກກຸຫຼາບ. ຄວາມຝັນທີ່ຕາຍແລ້ວຈະລຸກຂຶ້ນຈາກຂີ້ເຖົ່າໄຟຂອງຄວາມແຕກຫັກແລະຄວາມເຈັບປວດຂອງພວກເຮົາ. ພວກເຮົາຖືກຮຽກເອີ້ນໃຫ້ເບິ່ງໄປຂ້າງໜ້າໂດຍຄາດຫວັງ, ບໍ່ແມ່ນເບິ່ງຄືນຫຼັງ. ອົງພຣະເຢຊູກຳລັງເຊື້ອເຊີນພວກເຮົາໃຫ້ດຳເນີນຊີວິດໂດຍໃຊ້ຕານຶ່ງມອງໃສ່ການທ້າທາຍທີ່ພວກເຮົາກຳລັງປະເຊີນໜ້າຢູ່ໃນໂລກທີ່ກຳລັງຕາຍຢູ່ນີ້ ແລະອີກຕານຶ່ງມອງໃສ່ການອອກດອກອອກຜົນຂອງຄວາມເປັນຈິງໃໝ່. **ບັນດາຜູ້ທີ່ເຊື່ອສາມາດມອງເບິ່ງຊີວິດວ່າເປັນເຣື່ອງລາວອັນຍິ່ງໃຫຍ່ແຫ່ງພຣະຄຸນຢ່າງແທ້ຈິງ.** ພວກເຮົາສົມຄວນຢ່າງຍິ່ງທີ່ຈະສເລີມສລອງໃນວັນນີ້ ເພາະວ່າພວກເຮົາຢູ່ໃນນຶ່ງບາດກ້າວໃກ້ເຂົ້າສູ່ການມາເຖິງຂອງເຈົ້າບ່າວໃນທ່າມກາງຄວາມສຽ່ງຂອງສມັຍປະຈຸບັນ.

## 2. ມັດທາຍ 24:36-39

*36 "ແຕ່ເຣື່ອງວັນແລະໂມງນັ້ນບໍ່ມີໃຜຮູ້ ແມ່ນເທວະດາໃນສວັນຫລືພຣະບຸດກໍບໍ່ຮູ້. ຮູ້ແຕ່ພຣະບິດາອົງດຽວ. 37 ດ້ວຍວ່າສມັຍຂອງ*
*ໂນອາໄດ້ເປັນຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ. 38 ເພາະວ່າເມື່ອກ່ອນວັນນ້ຳຖ້ວມນັ້ນ ຄົນທັງຫລາຍໄດ້ກິນແລະ*
*ດື່ມ, ໄດ້ແຕ່ງງານແລະຍົກໃຫ້ເປັນຜົວເມັຽກັນ, ຈົນເຖິງວັນທີ່ໂນອາໄດ້ເຂົ້າໄປໃນນາວາ, 39 ແລະນ້ຳໄດ້ມາຖ້ວມກວາດເຂົາໄປໂດຍ*
*ບໍ່ທັນໄດ້ຮູ້ຕົວຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ.*

**ແຕ່ວ່າເມື່ອໃດສິ່ງເຫຼົ່ານີ້ຈະເກີດຂຶ້ນ?** ມີໃຜຮູ້ຈັກວັນຂອງອົງພຣະຜູ້ເປັນເຈົ້າ? ພຣະເຈົ້າເທົ່ານັ້ນ! ແລະພຣະອົງຈະບໍ່ຊົງບອກໃຜ. ພຣະເຈົ້າບໍ່ໄດ້ຊົງໃຫ້ຄວາມລຶກລັບນີ້ສຳລັບພວກເຮົາເພື່ອການໂຕ້ວາທີກ່ຽວກັບລຳດັບເຫດການ, ວິເຄາະວິຈັຍ, ການອຸປມາ, ແລະການຫາຄວາມໝາຍທີ່ຊັດເຈນໄດ້. ພຣະອົງໄດ້ຊົງປະທານຄວາມລຶກລັບອັນນີ້ເພື່ອໜຸນໃຈແລະກະຕຸ້ນພວກເຮົາໃຫ້ເຮັດພາຣະກິຈຂອງພຣະອົງໃຫ້ສຳເລັດ. ພວກເຮົາໄດ້ຮັບການເປັນສ່ວນນຶ່ງຂອງວິສັຍທັສ(ທັດສະນະ)ແຫ່ງການໄຖ່ບາບ ແລະການລະດົມພົນເພື່ອພາຣະກິຈທີ່ຂຍາຍກວ້າງອອກໄປຢ່າງຕໍ່ເນື່ອງ. ບໍ່ມີວຽກງານໃດທີ່ຍິ່ງໃຫຍ່ໄປກວ່ານີ້ແລະພວກເຮົາບໍ່ຮູ້ວ່າພວກເຮົາຈະມີເວລາເຫຼືອເທົ່າໃດ. ພວກເຮົາທຸກຄົນໃນລະດັບໃດລະດັບນຶ່ງຕ້ອງຈັດການກັບສິ່ງທີ່ລົບກວນ. ພຣະເຢຊູຊົງຮູ້ວ່າ: ເຖິງແມ່ນເຣື່ອງທັມມະດາການດຳເນີນຊີວິດປະຈຳວັນກໍສາມາດເຮັດໃຫ້ພວກເຮົາເອົາສາຍຕາອອກຈາກສິ່ງທີ່ສຳຄັນໄດ້. ພວກເຮົາສາ ມາດເອົາໃຈໃສ່ກັບຊີວິດຂອງພວກເຮົາ(ເກີນໄປ) ຈົນອາດຫຼົງລືມການຊົງສະເດັດກັບມາໃນທັນທີຂອງພຣະອົງ. ພວກເຮົາສາມາດ ຄິດກ່ຽວກັບການແຕ່ງງານ, ຄວາມຂັດແຍ້ງເລັກນ້ອຍ, ກິລາ, ຕລາດຫຼັກຊັບ(stock market), ໝູ່ເພື່ອນຂອງພວກເຮົາ, ເງິນບຳນານ, ການສເລີມສລອງ, ແລະສິ່ງສັງຄົມຫຼາຍເກີນໄປຈົນວ່າພວກເຮົາລືມຄິດໄປວ່າ: **ເວລາໃດກໍ່ຕາມສຽງແກອາດຈະດັງສນັ່ນຂຶ້ນ, ແລະທຸກສິ່ງທຸກຢ່າງຈະປ່ຽນໄປເປັນຄວາມຈິງໜ້າຢ້ານກົວຫຼື**

**<u>ຄວາມຈິງໜ້າຊົມຊື່ນຍິນດີ</u>.** ອົງພຣະເຢຊູໄດ້ຊົງປຽບທຽບການຊົງກັບມາຂອງອົງພຣະຜູ້ເປັນເຈົ້າແລະວັນເວລາຂອງໂນອາ, ໃນຂະນະທີ່ຫຼາຍປີ, ໃນຂະນະທີ່ເພື່ອນບ້ານ<u>ທັງໝົດ</u>ຂອງລາວພຽງແຕ່ພາກັນໄປທ່ຽວຫຼິ້ນເຣື່ອງຄວາມຮັກ, ຫາເງິນ, ສເລີມສລອງ, ວາງແຜນການ, ແລະຮ້ອງເພງມ່ວນຊື່ນເຮຮາ. ຫຼັງຈາກນັ້ນ, ປະຕູນໍ້າກໍ່ເປີດອອກແລະສຽງອື່ນໆກໍ່ບໍ່ມີຄວາມໝາຍອີກຕໍ່ໄປ. ບາງທີໃນລະຍະປີທີ່ບໍ່ມີການກະກຽມ, ພວກເພື່ອນບ້ານໄດ້ເຫັນລາວເປັນພຽງແຕ່ສະໄລດ໌ໂຊ ງານມ່ວນຊື່ນຢ່າງນຶ່ງ. ພວກເຂົາເຈົ້າອາດເຍາະເຍີ້ຍລາວ, ແຕ່ວ່າ ໂນອາຍັງໄດ້ສືບຕໍ່ກຽມຕົວຕໍ່ໄປ. ພຣະຄຳຂອງອົງພຣະເຢຊູຊົງເຕືອນພວກເຮົາວ່າ: ຄົນທີ່ບໍ່ເຊື່ອພຣະຄັມພີມັກຈະເຍາະເຍີ້ຍຫຼືສຽດສີຊາວຄຣິສະຕຽນທີ່ມີຄວາມເຊື່ອວ່າອົງພຣະເຢຊູຈະຊົງກັບມາອີກ. ແຕ່ຄືກັນກັບທີ່ພຣະເຢຊູໄດ້ຊົງຄາດຄະເນການທຳລາຍພຣະວິຫານ, ການຈັບກຸມ, ການຖືກຄຶງເທິງໄມ້ກາງແຂນ, ແລະການຊົງຟື້ນຄືນຊີວິດ, <u>ພວກເຮົາສາມາດໝັ້ນໃຈໄດ້ວ່າພຣະຄຳຂອງພຣະອົງເປັນຄວາມຈິງ</u>. <u>ຄວາມຮັບຜິດຊອບຂອງພວກເຮົາແມ່ນການດຳເນີນຊີວິດຕາມພຣະປະສົງຂອງອົງພຣະເຈົ້າແລະກະກຽມ</u>. ແນວຄິດຂອງບັນດາຜູ້ຕິດຕາມອົງພຣະຄຣິດໃນເວລາທີ່ລໍຖ້ານີ້ສົມຄວນຈະເປັນຄືກັນກັບຂອງອັຄສາວົກໂປໂລດັ່ງນີ້: *"ບໍ່ໃຊ້ວ່າເຮົາໄດ້ຮັບແລ້ວ ຫຼືວ່າເຖິງທີ່ສຳເລັດແລ້ວ ແຕ່ເຮົາກຳລັງບາກບັ່ນມຸ້ງໜ້າໄປ ເພື່ອຈະໄດ້ຮັບເອົາມາເປັນຂອງຕົນ ເໝືອນດັ່ງພຣະເຢຊູຄຣິດໄດ້ຊົງຮັບເຮົາໄວ້ເປັນຂອງພຣະອົງແລ້ວ. ພີ່ນ້ອງທັງຫລາຍເອີຍ, ເຮົາບໍ່ຖືວ່າເຮົາໄດ້ຮັບແລ້ວ ແຕ່ເຮົາເຮັດຢ່າງນຶ່ງ ຄືລືມສິ່ງເຫລົ່ານັ້ນທີ່ຜ່ານພົ້ນໄປແລ້ວເສັຽ ແລະໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງໜ້າ. ເຮົາກຳລັງບາກບັ່ນມຸ້ງໜ້າໄປສູ່ຫລັກຊັຍເພື່ອຈະໄດ້ຮັບລາງວັນ ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດ ໃຫ້ໄປຮັບຢູ່ເບື້ອງເທິງ."* (ຟລປ 3:12-14).

*ຄຳເຕືອນໃນຂໍ້ພຣະຄັມພີເຫຼົ່ານີ້ຄວນປ່ຽນແປງວິທີການດຳເນີນຊີວິດຂອງພວກເຮົາຢ່າງໃດ?*

## 3. <u>ມັດທາຍ 24:40-44</u>

*40 ເມື່ອນັ້ນຈະມີຊາຍສອງຄົນຢູ່ທີ່ງນາ ຈະຊົງຮັບຄົນນຶ່ງໄປ ຈະຊົງປະຄົນນຶ່ງໄວ້. 41 ຈະມີຍິງສອງຄົນກຳລັງໂມ້ແປ້ງຢູ່ທີ່ໂຮງໂມ້*
*ແປ້ງຈະຊົງຮັບຄົນນຶ່ງໄປ ຈະຊົງປະຄົນນຶ່ງໄວ້. 42 ເຫດສັນນັ້ນພວກທ່ານຈຶ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າ ອົງພຣະຜູ້ເປັນເຈົ້າ*
*ຂອງພວກທ່ານຈະສະເດັດມາໃນເວລາໃດ. 43 ແຕ່ຈົ່ງເຂົ້າໃຈຢ່າງນີ້ວ່າ ຖ້າເຈົ້າຂອງເຮືອນໄດ້ຮູ້ກ່ອນວ່າໂຈນຈະມາຍາມໃດ ຕົນຈະ*
*ເຝົ້າລະວັງໄວ້ບໍ່ໃຫ້ໂຈນເຈາະເຂົ້າເຮືອນໄດ້. 44 ເຫດສັນນັ້ນພວກທ່ານກໍເໝືອນກັນ ຈົ່ງຕຽມໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່*
*ທັນຄຶດນັ້ນ ບຸດມະນຸດຈະສະເດັດມາ."*

ຄຣິສຕະຈັກໄດ້ຢູ່ລອດມາຜ່ານການຂົ່ມເຫັງ, ສົງຄາມໂລກ, ພຍາດ, ການຕໍ່ສູ້ລົ້ມລຸກຄຸກຄານ, ການປະຖິ້ມຄວາມເຊື່ອ, ອຸປະສັກ, ແລະຄວາມຍາກລຳບາກອື່ນໆນັບພັນທີ່ມະນຸດສ້າງຂຶ້ນ. ໃນແຕ່ລະລຸ້ນ, ບັນດາຜູ້ເຊື່ອທີ່ຍິ່ງໃຫຍ່ໄດ້ອົດທົນ, ໄວ້ວາງໃຈໃນພຣະເຈົ້າ, ໄວ້ວາງໃຈໃນພຣະຄຳຂອງພຣະອົງ, ແລະລໍຖ້າດ້ວຍຄວາມອົດທົນແລະຄວາມຄາດຫວັງສຳລັບການຊົງສະເດັດກັບມາຂອງອົງພຣະຄຣິດ. ພວກເຮົາເປັນພາກສ່ວນນຶ່ງຂອງບັນດາຄອບຄົວທີ່ລໍຖ້າ, ໃນຂະນະທີ່ພວກເຮົາຈ້ອງສາຍຕານຶ່ງສູ່ສົງຄາມຕໍ່ໜ້າເຮົາ ແລະອີກຕານຶ່ງສູ່ແດນສວັນຢູ່ເໜືອພວກເຮົາ. **ພວກເຮົາໄດ້ພິສູດແລ້ວວ່າພວກເຮົາສາມາດເຮັດໄດ້ທັງສອງຢ່າງ.** ນີ້ຄືຄວາມສົມດຸນທີ່ພວກເຮົາທຸກຄົນຜະເຊີນໜ້າຢູ່. ພຣະເຢຊູຊົງໄດ້ກ່າວໄວ້ວ່າຈະມີການແຍກທາງກັນຢ່າງສັກສິດ. ຜູ້ຊາຍສອງຄົນຈະຢູ່ໃນທົ່ງນາ. ຜູ້ນຶ່ງຈະຖືກຮັບຂຶ້ນໄປ, ແລະອີກຜູ້ນຶ່ງຈະຖືກປະຖິ້ມໄວ້. ຜູ້ຍິງສອງຄົນກຳລັງເຮັດວຽກຢູ່ທີ່ໂຮງໂມ້ແປ້ງ. ຄົນນຶ່ງຈະຖືກຮັບຂຶ້ນໄປ, ແລະອີກຜູ້ນຶ່ງຈະຖືກປະຖິ້ມໄວ້. **ມັນແມ່ນຄຳທຳນວາຍທີ່ໜ້າສະເທືອນໃຈ.** ຕລອດຫຼາຍສະຕະວັດທີ່ຜ່ານມາ, ບາງຄຣິສຕະຈັກແລະສິດຍາພິບານໄດ້ສຸມໃສ່ສິ່ງທີ່ພວກເຂົາເຈົ້າເຫັນ, ບໍ່ເຄີຍເອົາໃຈໃສ່ຫຼາຍເຖິງຄວາມເປັນໄປໄດ້ຂອງການຊົງສະເດັດກັບຄືນມາຂອງພຣະຄຣິດ. ບັນດາຄົນອື່ນໄດ້ສຸມໃສ່ການພຍາກອນ, ຕາຕລາງ, ທິສດີ, ແລະກຳນົດເວລາກ່ຽວກັບການຊົງສະເດັດກັບຄືນມາຄັ້ງທີ່ສອງທີ່ມັນໃຊ້ເວລາແລະພລັງງານທັງໝົດຂອງພວກເຂົາເຈົ້າໂດຍເຫຼືອໜ້ອຍທີ່ຈະໃຫ້ກັບໂລກທີ່ແຕກຫັກ. ຄວາມຜິດຢູ່ໃນຈິດໃຈແນວຄິດທັງສອງ. ພວກເຮົາຕ້ອງປາຖນາການຊົງສະເດັດຄືນມາຂອງພຣະອົງໃນຂະນະທີ່ພຣະອົງໄດ້ຊົງຮັບໃຊ້ໃນບ່ອນທີ່ພຣະອົງໄດ້ຊົງວາງໄວ້. ພຣະເຢຊູໄດ້ຊົງກະຕຸ້ນຈິດໃຈຂອງບັນດາຜູ້ທີ່ຕິດຕາມພຣະອົງແລະຊົງເຕືອນພວກເຮົາວ່າຊີວິດຕ້ອງດຳເນີນຕໍ່ໄປ, ແຕ່ພວກເຮົາຕ້ອງຈັບຕາເບິ່ງຄວາມເປັນນິຣັນ(ຕລອດໄປເປັນນິດ)ເຊັ່ນກັນດ້ວຍ! **ດັ່ງນັ້ນ, ພວກເຮົາຈຳເປັນຕ້ອງພາກພຽນພຍາຍາມເພື່ອຈະຕື່ນຕົວ, ເຝົ້າລະວັງ,**

**ແລະອະທິຖານ.** ຈົ່ງດຳເນີນຊີວິດດ້ວຍຄວາມຮູ້ສຶກແຫ່ງຄວາມຄາດຫວັງອັນສັກສິດ. ການຊົງສະເດັດມາຂອງພຣະຜູ້ເປັນເຈົ້າຄວນກະຕຸ້ນເຕືອນໃຈຂອງພວກເຮົາໃຫ້ເຮັດທຸກສິ່ງທຸກຢ່າງທີ່ພວກເຮົາສາມາດເຮັດໄດ້ ເພື່ອສື່ສານພຣະກິດຕິຄຸນໄປສູ່ໂລກທີ່ລົງຫາຍໄປ. ບໍ່ເຄີຍມີຄວາມຕ້ອງການຫຼືໂອກາດໃດທີ່ຍິ່ງໃຫຍ່ກວ່ານີ້ທີ່ຈະແບ່ງປັນຂ່າວປະເສີດ.

*ທ່ານຈະໃຊ້ຊີວິດທີ່ແຕກຕ່າງແນວໃດໃນທຸກມື້ນີ້ຖ້າທ່ານຮູ້ວ່າພຣະເຢຊູຈະຊົງກັບມາໃນມື້ອື່ນ?*

ພວກເຮົາເຫັນໃນພຣະຄັມພີຊ່ວງນີ້ການຕັກເຕືອນແຫ່ງການຊົງພິພາກສາ, ຄວາມບໍ່ສາມາດຄາດຄະເນໄດ້, ແລະຄວາມເປັນຫ່ວງເປັນໄຍກັບຄວາມກັງວົນຂອງໂລກ, ແຕ່ມັນສິ້ນສຸດລົງດ້ວຍການຕັກເຕືອນທີ່ມີພະລັງ: **ຈົ່ງຕຽມພ້ອມ!** ສຳລັບບັນດາຜູ້ທີ່ເຊື່ອ, ການຕຽມຕົວທີ່ຍິ່ງໃຫຍ່ທີ່ສຸດທີ່ພວກເຮົາສາມາດເຮັດໄດ້ແມ່ນ ການດຳເນີນຊີວິດຕາມພຣະປະສົງຂອງອົງພຣະເຈົ້າ ແລະໃຫ້ໂລກໄດ້ຮັບຮູ້ເຖິງພລັງຂອງພຣະກິດຕິຄຸນຂ່າວປະເສີດ. ພວກເຮົາຕ້ອງເຮັດໃຫ້ມັນເປັນຄວາມຕັ້ງໃຈທຳອິດຂອງພວກເຮົາເພື່ອໃຫ້ໂລກຮູ້ວ່າ **ພຣະເຢຊູຊົງຊ່ອຍໃຫ້ລອດພົ້ນ**. ຜູ້ປະກາດຂ່າວປະເສີດ ບຽວລີ ກແຣມ (Billy Graham) ໄດ້ປະກາດດັ່ງນີ້: "ການຊົງສະເດັດມາຄັ້ງທີ່ສອງຂອງອົງພຣະຄຣິດຈະປະຕິວັດຫຼາຍທີ່ສຸດ ຈົນມັນຈະປ່ຽນແປງທຸກໆດ້ານຂອງຊີວິດຢູ່ໃນໂລກນີ້. **ພຣະຄຣິດຈະຊົງຄອງຣາຊອານາຈັກດ້ວຍຄວາມຊອບທັມ.**" ພຍາດຈະຖືກຈັບກຸມ, ຄວາມຕາຍຈະຖືກແກ້ໄຂ, ສົງຄາມຈະຖືກຍົກເລີກ, ແລະທັມມະຊາດຈະຖືກປ່ຽນແປງ. ມະນຸດຈະດຳລົງຢູ່ຕາມທີ່ຕັ້ງໃຈໄວ້ແຕ່ເລີ່ມແລກ. ໃນພຣະຄັມພີ ກິຈການ, ທ່ານລູກາເລົ່າເຖິງເຣື່ອງລາວການຊົງສະເດັດຂຶ້ນສູ່ສວັນຂອງອົງພຣະເຢຊູແລະວິທີທີ່ອົງພຣະເຢຊູ ຊົງທ້າທາຍບັນດາເຫຼົ່າສາວົກຂອງພຣະອົງໃຫ້ເປັນພຍານໃນກຸງເຢຣູຊາເລັມ, ຢູເດັຽ, ຊາມາເຣັຽ, ແລະຈົນທີ່ສຸດປາຍແຜ່ນດິນໂລກ (ກຈກ 1:1-8). ນີ້ຄົງເປັນເຣື່ອງທ້າທາຍສຳລັບຍຸກສມັຍທີ່ການເດີນທາງເປັນເຣື່ອງຍາກລຳບາກຫຼາຍທີ່ສຸດ. ພວກເຮົາຍັງຄົງພຍາຍາມເພື່ອບັນລຸເປົ້າໝາຍນັ້ນ.

## ນຳໃຊ້ໃນຊີວິດ

ພຣະເຢຊູເຈົ້າຈະຊົງສະເດັດກັບມາຮັບພວກເຮົາເຂົ້າສູ່ພຣະຣາຊອານາຈັກຂອງພຣະອົງ. ຈົ່ງໃຊ້ນີ້ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງອ່ານ.** ຈົ່ງກຳນົດເວລາໃນອາທິດນີ້ເພື່ອອ່ານພຣະຄັມພີ ມັດທາຍ ບົດທີ່ 24 ແລະໃຫ້ບັນທຶກກ່ຽວກັບການຊົງກັບມາຂອງອົງພຣະເຢຊູ.
- **ຈົ່ງຕັ້ງສະມາທິ.** ຈົ່ງອ່ານພຣະຄັມພີ ໂຢຮັນ ບົດ 14 ຂໍ້ 1-3 ແລະຈົ່ງຕັ້ງສະມາທິໃນເນື້ອໃນໃຈຄວາມເຫຼົ່ານີ້ ທີ່ຕັກເຕືອນພວກເຮົາບໍ່ໃຫ້ກັງວົນໃນການທີ່ພວກເຮົາປາສຈາກພຣະເຢຊູໃນປະຈຸບັນ, ແຕ່ຄວນໄດ້ຮັບກຳລັງໃຈເພາະພຣະອົງຈະຊົງສະເດັດກັບມາອີກ. ພຣະອົງຊົງກຽມການສຳລັບການກັບມາພົບກັນຂອງພວກເຮົາມາຫຼາຍພັນປີແລ້ວ. ມັນຄົງເປັນສະຖານທີ່ໃຫມ່ທີ່ຍອດຢ້ຽມສຳລັບພວກເຮົາທຸກຄົນ.
- **ຈົ່ງແບ່ງປັນ.** ຈົ່ງໄປຮ່ວມກັບໝູ່ເພື່ອນບາງຄົນແລະລົມກັນກ່ຽວກັບສິ່ງທີ່ທ່ານໄດ້ຄົ້ນພົບຈາກການອ່ານພຣະຄັມພີ ມັດທາຍ ບົດທີ່ 24 ແລະ ໂຢຮັນ ບົດທີ່ 14 ຂໍ້ 1-3. ຈົ່ງໃຊ້ບາງເວລາອະທິຖານຮ່ວມກັນເພື່ອໝູ່ເພື່ອນທີ່ຕ້ອງການ ການຊົງໄຖ່ໃຫ້ລອດພົ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**